# ບົດກ່າວເປີດກອງປະຊຸມ
# ທົບທວນ ແລະ ປັບປຸງແຜນຍຸດທະສາດ ແຫ່ງຊາດ
# ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ
# ຂອງທ່ານລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ
# ຮອງປະທານ, ຜູ້ປະຈຳການ ຄຄຊ ທີ່ໂຮງແຮມ ລາວປູາຊາ ຄັ້ງວັນທີ 20-21/05/2009

ທ່ານ ຜູ້ຕາງໜ້າອົງການສະຫະປະຊາຊາດ ປະຈຳລາວ
ບັນດາທ່ານ  ຜູ້ຕາງໜ້າອົງການຈັດຕັ້ງສາກົນ  ທີ່ນັບຖື
ບັນດາທ່ານ  ຜູ້ແທນ ແລະ ແຂກກອງປະຊຸມ  ທີ່ນັບຖື
ທ່ານຍິງ ແລະ ທ່ານຊາຍ  ທີ່ຮັກແພງ

ຂ້າພະເຈົ້າ: ໃນນາມ ຮອງປະທານ, ຜູ້ປະຈຳການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ມີຄວາມຮູ້ສຶກພາກພູມໃຈຢ່າງຍິ່ງທີ່ໄດ້ມີໂອກາດເຂົ້າຮ່ວມກອງປະຊຸມເພື່ອທົບທວນ ແລະ ປັບປຸງແຜນຍຸດທະສາດ ແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ແຕ່ 2003-2013 "ເສັ້ນທາງກ້າວໄປສູ່ຄວາມປອດໄພ" ຄັ້ງນີ້. ຊຶ່ງເປັນຄັ້ງທຳອິດທີ່ພວກເຮົາຈະໄດ້ພ້ອມກັນສະຫຼຸບຕີລາຄາຄືນ ຜົນການຈັດຕັ້ງປະຕິບັດໄລຍະ 6 ປີຜ່ານມາຂອງແຜນຍຸດທະສາດດັ່ງກ່າວ ບັນຫາໃດທີ່ເຫັນວ່າຍັງບໍ່ທັນແທດເໝາະກັບສະພາບການເຄື່ອນໄຫວຈັດຕັ້ງປະຕິບັດຕົວຈິງພວກເຮົາຈະໄດ້ພ້ອມກັນປະກອບຄວາມຄິດ, ຄວາມເຫັນເພື່ອປັບປຸງຄືນໃໝ່ໃຫ້ໄປຄຽງຄູ່ກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VI ແຕ່ (2006-2010) ແລະ  ແຜນຍຸດທະສາດ ແຫ່ງຊາດ ໃນການລົບລ້າງຄວາມທຸກຍາກໃນປີ 2020. ເພື່ອສ້າງພື້ນຖານໃຫ້ແກ່ການນຳພາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃຫ້ໄດ້ໃນປີ 2020 ນັ້ນ ມັນເປັນນະໂຍບາຍລວມຂອງລັດຖະບານ. ສະນັ້ນ, ຮຽກຮ້ອງໃຫ້ທຸກພາກສ່ວນຈະຕ້ອງໄດ້ສ້າງແຜນການລະອຽດເພື່ອຈັດຕັ້ງປະຕິບັດຕາມຄວາມຮັບຜິດຊອບໃນຂົງເຂດວຽກງານຂອງແຕ່ລະຂະແໜງການທີ່ຕົນເອງຮັບຜິດຊອບ.

ບັນດາທ່ານທີ່ຮັກແພງທັງຫຼາຍ

ກອງປະຊຸມຄັ້ງນີ້ ຈຸດປະສົງເພື່ອຕີລາຄາໃຫ້ເຫັນໄດ້ຈຸດອ່ອນຂໍ້ຄົງຄ້າງເພື່ອແກ້ໄຂ ແລະ ປັບປຸງສິ່ງເສີມດ້ານດີ ເພື່ອສ້າງເງື່ອນໄຂໃຫ້ແກ່ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດໃຫ້ບັນລຸໄດ້ເປົ້າໝາຍຂອງລັດຖະບານ ຕາມແຜນການຫຼຸດຜ່ອນຄວາມທຸກຍາກໃຫ້ປະຊາຊົນບັນດາເຜົ່າທົ່ວປະເທດ ພວກເຮົາຕ້ອງໄດ້ພ້ອມກັນເປັນເຈົ້າການສືບຕໍ່ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາພື້ນຖານໂຄງລ່າງໃນຫຼາຍຂົງເຂດ, ຢາກບັນລຸໄດ້ເປົ້າໝາຍດັ່ງກ່າວນັ້ນ ວຽກງານເກັບກູ້ລະເບີດເປັນບັນຫາໜຶ່ງທີ່ສຳຄັນທີ່ຂາດບໍ່ໄດ້ ຍ້ອນລະເບີດບໍ່ທັນແຕກທີ່ຕົກຄ້າງໃນປາງສົງຄາມໄດ້ກາຍເປັນສິ່ງກີດຂວາງໃຫ້ແກ່ການພັດທະນາເສດຖະກິດ ແຫ່ງຊາດ ແລະ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຊ້າ ໄປຄຽງຄູ່ກັນນັ້ນ ສປປ ລາວ ເປັນປະ

ເທດທີ່ດ້ອຍພັດທະນາ ລັດຖະບານຍັງຂາດເຂີນທຶນຮອນເພື່ອຈະນຳໃຊ້ເຂົ້າໃສ່ວຽກງານເກັບກູ້ລະເບີດ. ສະນັ້ນ, ຍັງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ຂໍຄວາມຊ່ວຍເຫຼືອທາງດ້ານທຶນຮອນຈາກຕ່າງປະເທດ.

ນອກຈາກປັດໃຈທີ່ໄດ້ກ່າວມາຂ້າງເທິງແລ້ວ, ໄລຍະນີ້ສະພາບວິກິດການທາງດ້ານເສດຖະກິດຍັງໄດ້ແຜ່ລາມອອກໄປທົ່ວໂລກ ມັນເປັນສິ່ງທ້າທາຍອັນໃຫ່ຍຫຼວງຕໍ່ການລະດົມທຶນຂອງພວກເຮົາ ຈາກບັນຫາເຫຼົ່ານັ້ນ ລັດຖະບານເຫັນວ່າ ມີຄວາມຈຳເປັນຈະຕ້ອງໄດ້ປັບປຸງແຜນຍຸດທະສາດ ແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ເພື່ອໃຫ້ບັນລຸເປົ້າໝາຍທີ່ລັດຖະບານຈະນຳພາປະເທດຊາດ ຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນສະຫະສະວັດໃໝ່ນີ້ ແລະ ພວກເຮົາຈະຕ້ອງໄດ້ພ້ອມກັນສູ້ຊົນຕື່ມອີກຫຼາຍປີ.

ໃນວາລະດຳເນີນກອງປະຊຸມອັນມີຄວາມໝາຍຄວາມສຳຄັນນີ້ ຂ້າພະເຈົ້າຮຽກຮ້ອງມາຍັງບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຈົ່ງພ້ອມກັນສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດ ເພື່ອປະກອບຄວາມຄິດເຫັນເປັນການແລກປ່ຽນບົດຮຽນເຮັດໃຫ້ເນື້ອໃນຂອງກອງປະຊຸມມີປະສິດທິພາບສູງຂຶ້ນຕື່ມອີກ.

ອີກເທື່ອໜຶ່ງຂ້າພະເຈົ້າຕາງໜ້າໃຫ້ລັດຖະບານ ແຫ່ງ ສປປ ລາວ ສະແດງຄວາມຂອບໃຈຢ່າງສູງຕໍ່ອົງການສະຫະປະຊາຊາດ ເພື່ອການພັດທະນາປະຈຳລາວ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ທີ່ໄດ້ໃຫ້ທຶນຊ່ວຍເຫຼືອແກ່ ສປປ ລາວ ໄລຍະຜ່ານມາໃນຫຼາຍດ້ານຕະຫຼອດມາ.

ຂໍຂອບໃຈ